# ຂໍ້ມູນເພີ່ມຕື່ມກ່ຽວກັບ
# ການໂອນຜົນປະໂຫຍດທາງອີເລັກໂທຣນິກ (EBT)

- ຖ້າທ່ານຍ້າຍໄປເຂດເມືອງອື່ນ ຫລື ອອກຈາກລັດ ແລະ ທ່ານກໍຍື່ນຄຳຮ້ອງຂໍຜົນປະໂຫຍດຢູ່ໃນເຂດເມືອງນັ້ນ ຫລື ລັດນັ້ນ, ທ່ານຈະໄດ້ຮັບບັດ EBT ໃໝ່. ຖ້າທ່ານມີຜົນປະໂຫຍດຈາກຟູດສະແຕມທີ່ເຫລືອຢູ່ໃນບັດ EBT ເກົ່າຂອງທ່ານນັ້ນທ່ານກໍຈະຍັງສາມາດນຳໃຊ້ມັນຢູ່ໃນເຂດເນື້ອທີ່ໃໝ່ຂອງທ່ານ. ໃຫ້ທ່ານກະຣຸນາຈື່ໄວ້ວ່າໃຫ້ນຳໃຊ້ຜົນປະໂຫຍດທັງໝົດທີ່ຍັງເຫລືອຢູ່ໃນບັດເກົ່າຂອງທ່ານນັ້ນໄວເທົ່າທີ່ຈະໄວໄດ້.

- ຖ້າວ່າຣະບົບ EBT ມີຄວາມຜິດພາດປາກົດຂຶ້ນແລະໄດ້ເກີດມີການດຶງເອົາຈຳນວນເງິນອອກຈາກເລກບັນຊີຂອງທ່ານຜິດໄປ,ໃຫ້ຕິດຕໍ່ໝາຍເລກບໍຣິການລູກຄ້າຟຣີ (1-877-328-9677) ການຮຽກຫວງຂອງທ່ານຈະໄດ້ຮັບການກວດສອບແລະຖ້າວ່າທ່ານໃຫ້ສິດທີ່ຈະຈ່າຍຄືນຟູດສະແຕມ ຫລື ຜົນປະໂຫຍດເປັນເງິນສົດນັ້ນ, ເລກບັນຊີຂອງທ່ານກໍຈະຖືກຕື່ມເງິນເຂົ້າໄປຕາມຈຳນວນນັ້ນ. ເມື່ອການຮຽກຫວງຂອງທ່ານຫາກຖືກປະຕິເສດໄປ, ທ່ານກໍມີສິດທີ່ຈະຫວງຂໍຟັງຄຳໃຫ້ການຢູ່ທີ່ຫ້ອງການສະຫວັດດີການທ້ອງຖິ່ນຂອງທ່ານເອງ.

- ຖ້າທ່ານບໍ່ນຳໃຊ້ຜົນປະໂຫຍດຂອງທ່ານເປັນເວລາ 180 ວັນ, ທ່ານກໍຈະບໍ່ສາມາດນຳໃຊ້ຜົນປະໂຫຍດຂອງທ່ານຈົນກວ່າທ່ານຈະຕິດຕໍ່ກັບເຈົ້າໜ້າທີ່ ເຂດເມືອງຂອງທ່ານ. ຖ້າ 185 ວັນ ທີ່ໄດ້ເພີ່ມໃຫ້ນັ້ນຫາກຜ່ານໄປແລະທ່ານກໍຍັງບໍ່ທັນນຳໃຊ້ຜົນປະໂຫຍດຂອງຕົນເທື່ອ, ແລ້ວຜົນປະໂຫຍດຂອງທ່ານນັ້ນກໍຈະຖືກຕັດອອກໄປຈາກເລກບັນຊີຂອງທ່ານທຸກໆເດືອນ. ຜົນປະໂຫຍດຈາກຟູດສະແຕມຈະບໍ່ກັບສູ່ສະຖານະເດີມ. ຜົນປະໂຫຍດເປັນແຄສຂອງທ່ານນັ້ນສາມາດຈະກັບສູ່ສະພາບເດີມໄດ້ຖ້າວ່າໂທໄປຫາເຈົ້າໜ້າທີ່ປະຈຳເຂດເມືອງຂອງທ່ານ.